ບົດທີ 15
ການຊ່ວຍເຫຼືອພໍ່ແມ່ ແລະ ຜູ້ດູແລເດັກພິການ



ຜູ້ເປັນພໍ່ແມ່ ຫຼື ຜູ້ດູແລເດັກນ້ອຍທີ່ພິການຕານັ້ນ ແມ່ນຕ້ອງການຄວາມຊ່ວຍເຫຼືອ ແລະ ຂໍ້ມູນຂ່າວສານ ທີ່ເປັນປະໂຫຍດຕໍ່ຄອບຄົວ ແລະ ຊຸມຊົນ. ການເບິ່ງແຍງດູແລເດັກທີ່ຕາບອດ ຫຼື ພິການຕາ ແມ່ນມີຄວາມທ້າທາຍຫຼາຍປະການ. ດັ່ງນັ້ນ ໃນບົດຮຽນນີ້ ຈະໃຫ້ຮູ້ເຖິງສະພາບຄອບຄົວຢູ່ຂົງເຂດຕ່າງໆນັ້ນ:

- ຮູ້ສຶກແນວໃດ ເມື່ອພວກເຂົາຮູ້ວ່າ ລູກຂອງພວກເຂົາຕາບອດ ຫຼື ພິການຕາ.
- ຮັບມືກັບຄວາມຮັບຜິດຊອບພິເສດ ທີ່ຕ້ອງໄດ້ປະຕິບັດຕໍ່ເດັກທີ່ຕາບອດ ຫຼື ພິການຕານັ້ນແນວໃດ.
- ໂຮມໂຕກັນແນວໃດ ໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ປັບປຸງຊີວິດການເປັນຢູ່ເດັກ ທີ່ຕາບອດ ຫຼື ພິການຕາ.
- ເຮັດວຽກເປັນກຸ່ມຄືແນວໃດ ເພື່ອເຮັດໃຫ້ຊຸມຊົນຂອງພວກເຂົາໃຫ້ການຊ່ວຍເຫຼືອແກ່ເດັກທີ່ພິການ.

ນອກຈາກນີ້ແລ້ວ, ຂໍ້ມູນຕ່າງໆໃນບົດຮຽນນີ້ ຍັງສາມາດຊ່ວຍໃຫ້ທ່ານປັບຕົວເຂົ້າກັບຄອບຄົວ ແລະ ຊຸມຊົນອີກດ້ວຍ.

ເມື່ອທ່ານຮູ້ວ່າ ລູກຂອງທ່ານຕາບອດ ຫຼື ພິການຕາ.

ຮຽນຮູ້ວ່າ ເດັກນ້ອຍເບິ່ງບໍ່ເຫັນດີ ຫຼື ພິການຕານັ້ນ ເປັນສິ່ງທີ່ໜ້າເສົ້າໃຈຫຼາຍສຳລັບຜູ້ທີ່ເປັນພໍ່ແມ່ ແລະ ຄອບຄົວ, ໂດຍປົກກະຕິແລ້ວ ຄວາມຮູ້ສຶກໂສກເສົ້າເສຍໃຈ ທີ່ເກີດຈາກການຮັບຮູ້ຂ່າວຄວາມພິການຂອງລູກ ກໍ່ຈະເປັນຜົນເນື່ອງເຮັດໃຫ້ເກີດຄວາມຮູ້ສຶກສະເທືອນໃຈ ຕ່າງໆ ນາໆ ຕາມມາ; ເປັນຕົ້ນແມ່ນຕົວທ່ານເອງ ແລະ ຄອບຄົວອາດຈະ:

- ຮູ້ສຶກກະວົນກະວາຍ ໃນສິ່ງທີ່ຈະຕ້ອງເຮັດ.

- ຮູ້ສຶກຢາກປະຕິເສດທີ່ຈະເຊື່ອວ່າ ລູກຂອງຕົນຕາບອດ, ບໍ່ສາມາດເບິ່ງເຫັນໄດ້ຄືກັນກັບເດັກຄົນອື່ນ.

- ເສຍໃຈທີ່ເຫັນລູກຕາບອດ ແລະ ກັງວົນນຳອະນາຄົດຈະເປັນແນວໃດ

- ຮູ້ສຶກຜິດຕໍ່ເຫດການທີ່ເປັນສາເຫດຂອງການຕາບອດ

- ຮູ້ສຶກເສຍໃຈ, ສິ້ນຫວັງ ແລະ ໝົດກຳລັງ ໃຈ.

- ຮູ້ສຶກໃຈຮ້າຍຕໍ່ກັບສິ່ງທີ່ເກີດຂຶ້ນ.

- ຮູ້ສຶກໂດດດ່ຽວ



- ຮູ້ສຶກອາຍ ເນື່ອງ ຈາກລູກຂອງຕົນ ພິການ.

ຜູ້ເປັນພໍ່ແມ່ອາດຈະພົບວ່າ ມັນສະບາຍໃຈກວ່າທີ່ໄດ້ຮັບຮູ້ກ່ຽວກັບອາການຂອງລູກ ເຊິ່ງ ຄວາມຮູ້ສຶກຕ່າງໆ ດັ່ງທີ່ກ່າວມາຂ້າງເທິງນັ້ນ ສາມາດຊ່ວຍໃຫ້ຮັບ ມືກັບມັນໄດ້ ໃນຂະນະດຽວກັນນັ້ນ ກໍຈະເປັນການລິເລີ່ມໃຫ້ການ ຊ່ວຍເຫຼືອແກ່ເດັກ ເຊັ່ນ: ຄວາມຮູ້ສຶກທີ່ຢາກປະຕິເສດຕໍ່ສິ່ງທີ່ເກີດ ຂຶ້ນນັ້ນ ອາດຊ່ວຍໃຫ້ຮູ້ສຶກບໍ່ໝັກໃຈຫຼາຍເກີນໄປຕໍ່ກັບການປ່ຽນ ແປງຢ່າງກະທັນຫັນໃນຊີວິດຂອງຕົນ. ພໍ່ແມ່ບາງຄົນກໍ່ເວົ້າວ່າ ຄວາມຮູ້ສຶກໃຈຮ້າຍ ຫຼື ຄວາມຮູ້ສຶກອັບອາຍນັ້ນ ແມ່ນເຮັດໃຫ້ ພວກເຂົາມີກຳລັງໃຈໃນການຊ່ວຍເຫຼືອລູກຂອງພວກເຂົາ ແລະ ຄອບຄົວອື່ນທີ່ມີລູກພິການ.

ຄອບຄົວ, ໝູ່ເພື່ອນຂອງທ່ານ ແລະ ຕົວທ່ານເອງ ຈະຕ້ອງ ມີຄວາມຮູ້ສຶກໃດໜຶ່ງດັ່ງທີ່ກ່າວມາກ່ອນແລ້ວນັ້ນ ແລະ ກໍຈະມີ ປະຕິກິລິຍາໂຕ້ຕອບຕໍ່ຄວາມຮູ້ສຶກເຫຼົ່ານັ້ນ ໃນທິດທາງທີ່ແຕກ ຕ່າງກັນ ແລະ ມັນເປັນສິ່ງທີ່ດີທີ່ສຸດ ທີ່ປ່ອຍໃຫ້ແຕ່ລະຄົນມີຄວາມຮູ້ສຶກໄປໃນທິດທາງຂອງ ໃຜລາວ ໂດຍບໍ່ໄດ້ຕຳໜິ ຫຼື ວິຈານຄວາມຮູ້ສຶກຂອງພວກເຂົາ.

ຄວາມຮູ້ສຶກເຫຼົ່ານີ້ ຈະຄ່ອຍໆຫລຸດຄວາມຮຸນແຮງລົງ ຕ່ຈາກນັ້ນ ທ່ານກໍຈະເລີ່ມຮັບຮູ້ວ່າ ລູກຂອງທ່ານກໍຕ້ອງການຄວາມຮັກ, ຄວາມອົບອຸ່ນ ການຝຶກຝົນ ແລະ ການຮຽນຮູ້ຄືກັນກັບ ເດັກປົກກະຕິທົ່ວໄປ ແລະ ຄືກັນກັບເດັກຄົນອື່ນ ສາມາດ ຊ່ວຍໃຫ້ທ່ານມີ, ຄວາມສຸກ, ແລະ ຄວາມມ່ວນຊື່ນໄດ້. ຄວາມ ຈິງທີ່ວ່າ ເຂົາບໍ່ສາ ມາດເບິ່ງເຫັນໄດ້ນັ້ນ ກໍ່ຈະບໍ່ ເປັນບັນຫາໃຫຍ່ອີກຕໍ່ໄປ.

ຄວາມຮູ້ສຶກເຫຼົ່ານີ້ ອາດຈະກັບຄືນມາອີກໃນໄລຍະເວລາ ທີ່ສຳຄັນໃນຊີວິດລູກຂອງທ່ານ ເຊັ່ນ: ເມື່ອເຂົາເລີ່ມເຂົ້າ ໂຮງຮຽນ. ຄວາມຈິງແລ້ວ ຄວາມຮູ້ສຶກເຫຼົ່ານັ້ນກັບມາ ກໍ່ບໍ່ ໄດ້ໝາຍຄວາມວ່າ ມັນຜິດປົກກະຕິ ແຕ່ມັນ ເປັນພຽງອີກບາດກ້າວໜຶ່ງ ເຊິ່ງ ເປັນໄລຍະເວລາທີ່ຄົນອື່ນຈະ ປັບຕົວເຂົ້າກັບລູກຂອງທ່ານ ກັບຄວາມພິການຂອງເຂົາ. ໂດຍປົກກະຕິແລ້ວ ຄວາມ ຮູ້ສຶກດັ່ງກ່າວຈະບໍ່ຮຸນແຮງຄື ກັນກັບເບື້ອງຕົ້ນ.

ການຈັດການກັບຄວາມຕຶງຄຽດໃນການດູແລເດັກພິການ.

ພໍ່ແມ່ ແລະ ຜູ້ດູແລເດັກທຸກຄົນ ລ້ວນແລ້ວແຕ່ມີຄວາມຕ້ອງການຊອກຫາວິທີທາງ ທີ່ຈະຈັດການກັບຄວາມຕຶງຄຽດທີ່ເກີດຂຶ້ນ. ພໍ່ແມ່ ແລະ ສະມາຊິກພາຍໃນຄອບຄົວ ຕ້ອງເຮັດວຽກຢ່າງໜັກໃນການດູແລເດັກ.

ຖ້າຫາກເດັກຄົນໃດຄົນໜຶ່ງ ມີບັນຫາທາງດ້ານສາຍຕາ ຫຼື ຕາບອດ ກໍຈະເຮັດໃຫ້ໜ້າວຽກພາຍໃນຄອບຄົວເພີ່ມຂຶ້ນອີກ.

ນອກຈາກດູແລເດັກແລ້ວ, ສະມາຊິກໃນຄອບຄົວຍັງຈະຕ້ອງເປັນຄູສອນອີກນຳ ເພື່ອຊ່ວຍໃຫ້ເດັກທີ່ພິການນັ້ນໄດ້ຮຽນຮູ້ໃນສິ່ງທີ່ເດັກປົກກະຕິຄົນອື່ນໄດ້ຮຽນຮູ້ ໂດຍຜ່ານທາງສາຍຕາ.

ບາງຄັ້ງມັນກໍມີຄວາມຫຍຸ້ງຍາກລຳບາກຫຼາຍ ໃນການຮັບພາລະການລ້ຽງດູເດັກທີ່ມີບັນຫາທາງສາຍຕານັ້ນ. ຕໍ່ໄປນີ້ແມ່ນຈະໄດ້ນຳສະເໜີຄຳແນະນຳຈຳນວນໜຶ່ງ ຈາກບັນດາຄອບຄົວທີ່ໄດ້ນຳໃຊ້ວິທີການຕ່າງໆ ຊ່ວຍພວກເຂົາໃນການຈັດການກັບຄວາມຕຶງຄຽດທີ່ເກີດຂຶ້ນໃນການດູແລເດັກທີ່ພິການທາງສາຍຕາ, ລະອຽດດັ່ງນີ້:

ຍອມຮັບສະພາບຄວາມເປັນຈິງ.

ຕ້ອງຮັບຮູ້ຄວາມຈິງສະເໝີວ່າທ່ານ ແລະ ສະມາຊິກໃນຄອບຄົວ ຫຼື ບຸກຄົນອື່ນຕ້ອງໃຊ້ເວລາຫຼາຍ ໃນການເບິ່ງແຍງເດັກພິການ.

ຈົ່ງພະຍາຍາມດັດປັບກິດຈະກຳຕ່າງໆ ເພື່ອເຮັດໃຫ້ກິດຈະກຳເຫຼົ່ານັ້ນງ່າຍຂຶ້ນ ແລະ ເໝາະສົມກັບຊີວິດປະຈຳວັນຂອງທ່ານ ແລະ ໃຊ້ເວລາໜ້ອຍ.

ພະຍາຍາມເຮັດໃຫ້ໜ້າວຽກຂອງກິດຈະກຳທີ່ໃຫຍ່ໃຫ້ນ້ອຍລົງ ແລະ ງ່າຍຂຶ້ນ, ສິ່ງດັ່ງກ່າວນີ້ ຈະຊ່ວຍໃຫ້ເຫັນຄວາມຄືບໜ້າໄດ້ໄວກວ່າ ແລະ ຈະບໍ່ເຮັດໃຫ້ເດັກລົ້ມເລີກຄວາມພະຍາຍາມ.



ການດູແລຕົນເອງ

ໂດຍລວມແລ້ວ ທຸກຄົນລ້ວນແລ້ວແຕ່ຕ້ອງການເວລາພັກຜ່ອນໃຫ້ແກ່ຕົນເອງ, ແຕ່ພໍ່ແມ່ສ່ວນໃຫຍ່ແມ່ນບໍ່ໄດ້ພັກຜ່ອນເລີຍ ເນື່ອງຈາກວ່າພວກເຂົາມີວຽກຫຼາຍ. ຖ້າຫາກທ່ານອິດເມື່ອຍ ເຊິ່ງອາດຈະສົ່ງຜົນເຮັດໃຫ້ບໍ່ສະບາຍ, ຕໍ່ຈາກນັ້ນ ກໍຈະເຮັດໃຫ້ທ່ານບໍ່ສາມາດໃຫ້ການຊ່ວຍເຫຼືອລູກຂອງຕົນ ທີ່ພິການໄດ້ອີກ.

ດັ່ງນັ້ນ ຈົ່ງຊ່ວຍໃຫ້ຕົນເອງໄດ້ພັກຜ່ອນ ແລະ ພະຍາຍາມບໍ່ໃຫ້ຄິດຫຍັງທັງໝົດ ໃນສິ່ງຕ່າງໆ ທີ່ຈະຕ້ອງໄດ້ເຮັດ ໃນຊົ່ວຂະນະໃດໜຶ່ງ.

ການສະມາທິ

ໃນຫຼາຍຊຸມຊົນທີ່ໄດ້ມີການພັດທະນາຄວາມເຊື່ອ ແລະ ຮີດຄອງປະເພນີເຂົ້າມາຊ່ວຍໃນການສະຫງົບສະຕິອາລົມຂອງຄົນເຮົາ; ລວມໄປເຖິງການສ້າງຄວາມເຂັ້ມແຂງທາງດ້ານຈິດໃຈ. ຈົ່ງລອງປະຕິບັດຕາມວິທີການໃດໜຶ່ງ ທີ່ເປັນຄວາມເຊື່ອ ຫຼື ຮີດຄອງປະເພນີຂອງທ່ານນັ້ນ ເຊິ່ງອາດຈະຊ່ວຍໃຫ້ທ່ານຮັກສາສຸຂະພາບຂອງຕົນເອງໄດ້.



ອອກກາຍແບບໄຕ-ຈີ

ການໂອ້ລົມກັບສະມາຊິກໃນຄອບຄົວ

ທຸກຄົນໃນຄອບຄົວລ້ວນແລ້ວແຕ່ມີບົດບາດໃນຊີວິດຂອງເດັກ, ສະມາຊິກແຕ່ລະຄົນນັ້ນກໍ່ໄດ້ດູແລເດັກ ໂດຍສະເພາະ ກໍແມ່ນຄວາມຕ້ອງການພິເສດໃດໜຶ່ງຂອງເດັກພິການ. ສະມາຊິກໃນຄອບຄົວນັ້ນ ອາດຈະມີແນວຄວາມຄິດທີ່ດີທີ່ສຸດ ໃນການຍົກລະດັບຊີວິດການເປັນຢູ່ ແລະ ໃຫ້ການຊ່ວຍເຫຼືອເດັກທີ່ພິການ; ດັ່ງນັ້ນ ມັນມີຄວາມສຳຄັນຫຼາຍທີ່ຈະຊອກຫາເວລາໂອ້ລົມກັນພາຍໃນຄອບຄົວ ແລະ ກໍລະນີທີ່ ສະມາຊິກຄອບຄົວຄົນໃດຄົນໜຶ່ງຫາກຮູ້ສຶກທໍ້ຖອຍ ຫຼື ອິດເມື່ອຍ, ສະມາຊິກຄົນອື່ນອາດຈະສາມາດຊ່ວຍໄດ້.

ການຂໍຄວາມຊ່ວຍເຫຼືອຈາກຄົນອື່ນ.

ທ່ານອາດບໍ່ຈຳເປັນທີ່ຈະຕ້ອງເຮັດທຸກກິດຈະກຳກັບລູກດ້ວຍຕົວເອງ ສະມາຊິກແຕ່ລະຄົນພາຍໃນຄອບຄົວນັ້ນສາມາດຊ່ວຍໄດ້ ເຊິ່ງອາດຈະເປັນໝູ່ເພື່ອນ ຫຼື ເພື່ອນບ້ານກໍ່ໄດ້. ຖ້າຫາກຮູ້ສຶກອິດເມື່ອຍ ຫຼື ທໍ້ຖອຍນັ້ນ ການຂໍຄຳປຶກສາກັບຄົນອື່ນ ກໍອາດສາມາດຊ່ວຍທ່ານຫາທາງອອກຂອງບັນຫາໄດ້, ດັ່ງນັ້ນ ຈົ່ງພະຍາຍາມຊອກຫາຄົນໃດຄົນໜຶ່ງ ທີ່ສາມາດໃຫ້ຄຳປຶກສາແກ່ທ່ານໄດ້ໃນເມື່ອຍາມທີ່ທ່ານຕ້ອງການ.

ຂໍຄຳປຶກສາກັບຜູ້ໃຫຍ່ທີ່ຕາບອດ, ພະນັກງານແພດໝໍ ຫຼື ບຸກຄົນທີ່ສອນເດັກພິການສາຍຕາ ແມ່ນຈະສາມາດຊ່ວຍໄດ້ຫຼາຍ ຖ້າຫາກລູກຂອງທ່ານເບິ່ງຄືວ່າບໍ່ມີການຮຽນຮູ້ທັກສະໃໝ່ໃດໜຶ່ງ ຫຼັງຈາກເວລາໄດ້ 5-6 ເດືອນ.



ພະລັງແຮງຂອງພໍ່ແມ່ ທີ່ເຮັດວຽກຮ່ວມກັນ.

ການເຮັດວຽກຮ່ວມກັນກັບບັນດາພໍ່ແມ່ ຄົນອື່ນທີ່ມີລູກພິການນັ້ນ ສາມາດຊ່ວຍໄດ້ຫຼາຍສິ່ງ ເປັນຕົ້ນແມ່ນ ການເຮັດວຽກຮ່ວມກັນນັ້ນ ຈະເປັນການ:

- ເປີດໂອກາດແລກປ່ຽນຄວາມຮູ້ສຶກ ແລະ ຂໍ້ມູນຂ່າວສານ.
- ເປີດໂອກາດໃຫ້ພໍ່ແມ່ແຕ່ລະຄົນສະເໜີແນວຄວາມຄິດ ກ່ຽວກັບກິດຈະກຳຕ່າງໆ ໃນການຊ່ວຍເຫຼືອລູກຂອງພວກເຂົາ ແລະ ວິທີການທີ່ດີທີ່ສຸດໃນການດັດປັບກິດຈະກຳ ສຳລັບເດັກທີ່ພິການ.
- ເປີດໂອກາດໃຫ້ແລກປ່ຽນຄວາມຄິດເຫັນ ໃນການດັດປັບກິດຈະກຳຂອງເດັກໃຫ້ແທດ ເໝາະກັບ ວິຖີການດຳລົງຊີວິດຂອງຄອບຄົວ ແລະ ຊຸມຊົນ.
- ເປີດໂອກາດໃຫ້ເຮັດວຽກຮ່ວມກັນ ເພື່ອໃຫ້ຊຸມຊົນມີຄວາມເປັນມິດ ແລະ ປອດໄພ ແລະ ຊ່ວຍເຫຼືອເດັກທີ່ພິການ.

ຖ້າຫາກມີພໍ່ແມ່ຫຼາຍຄົນ ມີສະພາບຄືກັນກັບຕົນເອງ, ແຕ່ບໍ່ທັນມີກຸ່ມພໍ່ແມ່ໃດເທື່ອ ໃນຂົງ ເຂດນັ້ນ, ທ່ານອາດຈະຕັດສິນໃຈສ້າງເປັນກຸ່ມໃດກຸ່ມໜຶ່ງຂຶ້ນມາ. ໃນໄລຍະຜ່ານມານັ້ນ ກໍ ໄດ້ມີກຸ່ມຂອງບັນດາພໍ່ແມ່ເດັກພິການທີ່ມີຄວາມເຂັ້ມແຂງທີ່ສຸດ ແລະ ຫ້າວຫັນທີ່ສຸດ ເກີດ ຂຶ້ນຈາກແນວຄວາມຄິດ ຂອງບຸກຄົນຜູ້ດຽວເປັນຜູ້ລິເລີ່ມ. ເມື່ອສ້າງເປັນກຸ່ມແລ້ວ ບັນດາຜູ້ ເປັນພໍ່ແມ່ ກໍຈະສາມາດເຮັດວຽກຮ່ວມກັນໃນການແກ້ໄຂບັນຫາຕ່າງໆ. ການແກ້ໄຂບັນຫາ ຮ່ວມກັນແມ່ນຈະໄດ້ຮັບຜົນດີກວ່າ ການແກ້ໄຂບັນຫາຢ່າງລຳພັງ.



ການເລີ່ມຕົ້ນສ້າງເປັນກຸ່ມ.

ເລີ່ມຕົ້ນດ້ວຍການຊອກຫາຜູ້ທີ່ເປັນພໍ່ແມ່ສອງຄອບຄົວຂຶ້ນໄປ ທີ່ມີລູກພິການທາງສາຍຕາ ແຕ່ຖ້າຫາກບໍ່ມີຄອບຄົວໃດທີ່ມີລູກພິການຕາ ກໍອາດຈະຮວບຮວມເອົາກຸ່ມພໍ່ແມ່ທີ່ມີລູກພິການປະເພດຕ່າງໆ, ນອກຈາກນັ້ນ ພະນັກງານແພດໝໍກໍອາດຈະຮູ້ບັນດາພໍ່ແມ່ທີ່ມີລູກພິການ ໃນບໍລິເວນໃກ້ຄຽງຊຸມຊົນ ເຊິ່ງອາດຈະຊ່ວຍທ່ານໄດ້.

ພ້ອມກັນນັ້ນ ຕ້ອງມີການວາງແຜນວ່າ ຈະໃຊ້ສະຖານທີ່ໃດເປັນບ່ອນປະຊຸມກັນ, ມັນຈົ່ງຈະໄດ້ບ່ອນທີ່ເໝາະສົມ ເຊັ່ນ: ໂຮງຮຽນ, ສູນອະນາໄມ, ວັດ ຫຼື ຫ້ອງການບ້ານ. ໃນການປະຊຸມກັນເບື້ອງຕົ້ນນັ້ນ ຕ້ອງມີການປຶກສາຫາລືກັນ ເຖິງຈຸດປະສົງຂອງການຮ່ວມກຸ່ມ ແລະ ແຜນການເຄື່ອນໄຫວຂອງກຸ່ມວ່າຕ້ອງການເຮັດຫຍັງ.

ເຊິ່ງອາດຈະໃຫ້ຜູ້ໃດຜູ້ໜຶ່ງເປັນຜູ້ນຳພາ ໃນການປະຊຸມກັນ 2-3 ຄັ້ງ ເບື້ອງຕົ້ນນັ້ນ, ແຕ່ບໍ່ໄດ້ໝາຍຄວາມວ່າ ໃຫ້ບຸກຄົນດັ່ງກ່າວນັ້ນ ຕັດສິນໃຈແທນກຸ່ມໄດ້ ເຊິ່ງເປັນສິ່ງທີ່ສຳຄັນທີ່ສຸດ. ທຸກຄົນພາຍໃນກຸ່ມຄວນມີໂອກາດໄດ້ເວົ້າ ແຕ່ຕ້ອງພະຍາຍາມບັນຫາທີ່ກຳລັງປຶກສາຫາລືກັນນັ້ນ ຖືກຕ້ອງຕາມຈຸດປະສົງຂອງການປະຊຸມ. ຫຼັງຈາກທີ່ໄດ້ປະຊຸມກັນ 2-3 ຄັ້ງແລ້ວ ຄວນໃຫ້ມີການຜັດປ່ຽນກັນນຳພາກຸ່ມ ເຊິ່ງຈະຊ່ວຍໃຫ້ສະມາຊິກທີ່ຂີ້ອາຍນັ້ນ ເຂົ້າຮ່ວມຕື່ມ.

ການຮຽນຮູ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

ເຖິງແມ່ນວ່າພໍ່ແມ່ນັ້ນ ຮູ້ຈັກກັນດີແລ້ວກໍຕາມ ມັນກໍ່ຍັງຕ້ອງໃຊ້ເວລາ ທີ່ຈະສາມາດມີໂອ້ລົມກັນຢ່າງເປີດເຜີຍ ກ່ຽວກັບຄວາມຮູ້ສຶກ, ປະສົບການ ແລະ ຄວາມທ້າທາຍໃນການຊ່ວຍເຫຼືອລ້ຽງດູເດັກພິການ. ສິ່ງດັ່ງກ່າວນີ້ ຕ້ອງໄດ້ຮັບການຝຶກເທື່ອລະກ້າວ. ເນື້ອໃນຕໍ່ໄປນີ້ແມ່ນຈະໄດ້ນຳສະເໜີຄຳແນະນຳຈຳນວນໜຶ່ງໃນການຊ່ວຍສະມາຊິກພາຍໃນກຸ່ມໃຫ້ຮູ້ສຶກສະບາຍໃຈ ແລະ ເຊື່ອໝັ້ນເຊິ່ງກັນ ແລະ ກັນ.

ຈົ່ງຮັບຟັງໃນສິ່ງທີ່ຄົນອື່ນເວົ້າຢ່າງລະອຽດຖີ່ຖ້ວນ ໂດຍປັດສະຈາກການຕຳໜິວິຈານໃນສິ່ງທີ່ພວກເຂົາເວົ້າມາ ແລະ ຕ້ອງຄິດສະເໝີວ່າ ທ່ານຕ້ອງການໃຫ້ບຸກຄົນອື່ນຮັບຟັງຕົນເອງແນວໃດ, ທ່ານເອງກໍຕ້ອງຮັບຟັງຄຳເວົ້າບຸກຄົນອື່ນ ເຊັ່ນດຽວກັນ.

ຈົ່ງພະຍາຍາມບອກຄົນອື່ນວ່າ ເຮັດຫຍັງ? ທ່ານສາມາດຊ່ວຍເຫຼືອບຸກຄົນອື່ນໃຫ້ເຂົ້າໃຈວ່າ ພວກເຂົາຮູ້ສຶກແນວໃດ? ແລະ ແລກປ່ຽນປະສົບການຂອງທ່ານເອງກັບພວກເຂົາ, ແຕ່ທຸກຄົນຕ້ອງຕັດສິນໃຈດ້ວຍຕົນເອງວ່າ ອັນໃດເປັນວິທີທີ່ດີທີ່ສຸດໃນການດູແລລູກຂອງພວກເຂົາ.

ຕ້ອງຮັກສາຄວາມລັບຂອງຄົນອື່ນ, ໂດຍທີ່ບໍ່ໄດ້ບອກກ່າວກັບຄົນອື່ນ ກ່ຽວກັບສິ່ງຕ່າງໆ ທີ່ໄດ້ປຶກສາຫາລືກັນໃນທີ່ປະຊຸມ ຈົນກວ່າທີ່ທຸກຄົນຈະເຫັນວ່າ ມັນເປັນເລື່ອງທຳມະດາ.

ການວາງແຜນໃນການປະຕິບັດຕົວຈິງ.

ເມື່ອບັນດາພໍ່ແມ່ໄດ້ເຮັດວຽກຮ່ວມກັນ, ພວກເຂົາສາມາດປະຕິບັດຕົວຈິງໃນການແກ້ໄຂບັນຫາໄດ້ຫຼາຍບັນຫາ. ດັ່ງນັ້ນ ໃນຫົວຂໍ້ນີ້ ແມ່ນຈະໄດ້ນຳສະເໜີແຕ່ລະບາດກ້າວໃນການປະຕິບັດຕົວຈິງ ທີ່ບັນດາກຸ່ມພໍ່ແມ່ ຄົ້ນພົບວ່າ ໄດ້ຮັບຜົນດີ, ລະອຽດດັ່ງລຸ່ມນີ້:

1. ຄັດເລືອກເອົາບັນຫາທີ່ທຸກຄົນພາຍໃນກຸ່ມເຫັນວ່າມີຄວາມສຳຄັນ, ເຖິງແນວໃດກໍ່ຕາມ ການຜັດປ່ຽນໄປຕາມແຕ່ລະບັນຫານັ້ນ ກໍມີຄວາມຈຳເປັນ ເຊິ່ງກຸ່ມຂອງທ່ານຈະໄດ້ຮັບປະສິດທິພາບສູງກວ່າ ຖ້າຫາກບັນຫາທີ່ຍົກຂຶ້ນມານັ້ນ ເປັນບັນຫາທີ່ໄດ້ຮັບການແກ້ໄຂມາກ່ອນແລ້ວ. ໃນເບື້ອງຕົ້ນກໍຍົກບັນຫາທີ່ກຸ່ມສາມາດແກ້ໄຂໄດ້ຢ່າງມີປະສິດທິພາບ ແລະ ໄດ້ຮັບຜົນສູງ ຕໍ່ຈາກນັ້ນ ກໍ່ໃຫ້ສະມາຊິກພາຍໃນກຸ່ມຮຽນຮູ້ຮ່ວມກັນ ເຊິ່ງບັນຫາທີ່ຍົກມານັ້ນ ອາດຈະເປັນບັນຫາທີ່ອ່າວຫຍຸ້ງຍາກສັບສົນກໍ່ໄດ້.

2. ຈົ່ງຕັດສິນໃຈວ່າທ່ານຕ້ອງການແກ້ໄຂບັນຫານັ້ນແນວໃດ ຕໍ່ຈາກນັ້ນ ກໍຈັດລຽງວິທີການແກ້ໄຂບັນຫາ ແລະ ກໍ່ເລືອກເອົາວິທີທີ່ດີທີ່ສຸດທີ່ແທດເໝາະກັບຊັບພະຍາກອນ ແລະ ຈຸດແຂງຂອງກຸ່ມ.

3. ສ້າງເປັນແຜນການຢ່າງລະອຽດ, ບັນດາສະມາຊິກພາຍໃນກຸ່ມຕ້ອງເຮັດວຽກຕາມການແບ່ງຄວາມຮັບຜິດຊອບໃຫ້ ພ້ອມທັງຄາດຄະເນໄລຍະເວລາທີ່ຈະສຳເລັດໃນແຕ່ລະໜ້າວຽກຢ່າງເໝາະສົມວ່າ ໜ້າວຽກທີ່ມອບໝາຍໃຫ້ແຕ່ລະບຸກຄົນນັ້ນ ຄວນຈະສຳເລັດເມື່ອໃດ?

4. ເມື່ອລວມຕົວກັນໄດ້ແລ້ວ ກໍ່ປຶກສາຫາລືກັນອີກວ່າ ວຽກງານດັ່ງກ່າວນັ້ນ ຈະດຳເນີນຕໍ່ໄປຄືແນວໃດ? ແລະ ສາມາດທີ່ຈະປັບແຜນການໄດ້ຕາມຄວາມຈຳເປັນ ຖ້າຫາກມີຄວາມຫຍຸ້ງຍາກເກີດຂຶ້ນ.



ການເຮັດວຽກຮ່ວມກັນເພື່ອຄວາມປ່ຽນແປງ.

ບັນດາກຸ່ມພໍ່ແມ່ເດັກທີ່ພິການນັ້ນ ແມ່ນໄດ້ເຮັດວຽກຢູ່ຫຼາຍສາຂາອາຊີບທີ່ແຕກຕ່າງກັນ ເຊັ່ນ: ພວກເຂົາອາດຈະເຮັດວຽກກ່ຽວກັບປັບປຸງພື້ນຖານເສດຖະກິດຂອງຄອບຄົວ, ວຽກງານແນວຄິດຂອງຊຸມຊົນ, ການບໍລິການ ຫຼື ການປັບປຸງກົດໝາຍຂອງລັດຖະບານ ສຳລັບເດັກທີ່ພິການທາງສາຍຕາ. ທຸກສິ່ງທຸກຢ່າງທີ່ກ່າວໄປນັ້ນ ກໍ່ເປັນອີກວິທີໜຶ່ງໃນການຊ່ວຍເຫຼືອລູກຂອງພວກເຂົາ.

ເດັກທີ່ພິການທາງສາຍຕາ ສ່ວນໃຫຍ່ແມ່ນມາຈາກຄອບຄົວທີ່ທຸກຈົນ, ດັ່ງນັ້ນ ໃນການສະໜອງຊັບພະຍາກອນຕ່າງໆ ໃຫ້ແກ່ລູກຂອງພວກເຂົານັ້ນ, ກຸ່ມຜູ້ທີ່ເປັນພໍ່ແມ່:

- ສາມາດຊອກຫາວິທີທາງໃຫ້ໄດ້ແຫລ່ງທຶນເພື່ອສະໜອງໃຫ້ແກ່ໂຄງການໃໝ່ໃນການຊ່ວຍເຫຼືອເດັກທີ່ພິການທາງສາຍຕາ.
- ສາມາດຊ່ວຍເຫລືອສະມາຊິກພາຍໃນກຸ່ມພັດທະນາວິຊາຊີບໃໝ່.
- ສາມາດຈັດຕັ້ງກອງປະຊຸມວິຊາການກ່ຽວກັບວິທີທາງໃນການສິດສອນ ແລະ ໃຫ້ການຊ່ວຍເຫຼືອເດັກທີ່ພິການ.
- ສາມາດພັດທະນາກຸ່ມ, ຄ້າຍ ຫລື ສູນໄວ້ສຳລັບອ້າຍ, ເອື້ອຍ ແລະ ນ້ອງຂອງເດັກທີ່ພິການ.

ບັນດາຜູ້ເປັນແມ່ເຫລົ່ານີ້ ກຳລັງຮຽນວິທີການຫຍິບເຄື່ອງ ເຊິ່ງພວກເຂົາສາມາດຫາລາຍໄດ້ເພີ່ມ, ໄດ້ເຮັດວຽກໃກ້ກັບເຮືອນ ແລະ ໄດ້ມີເວລາຫຼາຍຂຶ້ນຢູ່ກັບລູກຂອງພວກເຂົາ

ບັນດາກຸ່ມພໍ່ແມ່ເດັກພິການນັ້ນ ສາມາດເຮັດໃຫ້ຊຸມຊົນມີຄວາມເປັນມິດ, ປອດໄພຫຼາຍຂຶ້ນ ສຳລັບເດັກທີ່ພິການ ລວມໄປເຖິງເພື່ອນບ້ານທີ່ມີການປັບປຸງບັນຫາຄວາມປອດໄພຢູ່ໃນຊຸມຊົນ (ລະອຽດໃນ ບົດທີ 9) ເຊິ່ງເປັນວິທີທາງທີ່ດີທີ່ສຸດ ໃນການເລີ່ມຕົ້ນສ້າງຄວາມສາມັກຄີ ລະຫວ່າງຄົນພິການ ແລະ ຄົນປົກກະຕິ.

ກຸ່ມທີ່ເປັນພໍ່ແມ່ເດັກພິການ ສ່ວນຫຼາຍແມ່ນໄດ້ສຸມໃສ່ຈັດຕັ້ງການສຶກສາອົບຮົມໃຫ້ແກ່ຊຸມຊົນ ກ່ຽວກັບຄົນພິການ ເຊິ່ງພວກເຂົາມັກໃຊ້ຮູບແບບຂອງການຈັດຕັ້ງເປັນກຸ່ມສົນທະນາ, ການປະຊຸມປຶກສາຫາລື, ຜ່ານລາຍການວິທະຍຸ, ໜັງສືພິມ, ກະດານຂ່າວ, ເຮັດການສະແດງຕາມທ້ອງຖະໜົນ ຫົນທາງ, ເຮັດປ້າຍໂຄສະນາ ເພື່ອເຮັດໃຫ້ບຸກຄົນອື່ນເຂົ້າໃຈຫລາຍຂຶ້ນ ກ່ຽວກັບຄົນພິການ.

ສ່ວນພໍ່ແມ່ໃນກຸ່ມອື່ນ ແມ່ນອາດຈະເຮັດວຽກຢູ່ໃນໂຄງການຕ່າງໆ ເພື່ອຊ່ວຍເຫຼືອລູກຂອງພວກເຂົາທີ່ພິການໃຫ້ກາຍເປັນສະມາຊິກທີ່ດີຂອງຊຸມຊົນ ເຊິ່ງກຸ່ມພໍ່ແມ່ດັ່ງກ່າວນັ້ນສາມາດ:

- ຈັດຕັ້ງການແຂ່ງຂັນກີລາ ລວມທັງກີລາສຳລັບເດັກທີ່ພິການ.
- ສ້າງເດີ່ນຫີ້ນສຳລັບເດັກນ້ອຍທຸກຄົນ(ບົດທີ 13 ການກາຍເປັນພາກສ່ວນໜຶ່ງຂອງຊຸມຊົນ).
- ສ້າງເປັນສູນປິ່ນປົວ, ຮັກສາເດັກ ເຊິ່ງເດັກທີ່ພິການກໍ່ສາມາດເຂົ້າຮັບຮັກສາໄດ້ຄືກັນກັບເດັກປົກກະຕິຄົນອື່ນໆ (ເບິ່ງບົດທີ 14 ສ້າງຄວາມພ້ອມໃນການສ້າງສູນລ້ຽງເດັກ ແລະ ໂຮງຮຽນໃຫ້ແກ່ເດັກ).

ກຸ່ມພໍ່ແມ່ຈຳນວນໜຶ່ງ ຜັດເຮັດວຽກກ່ຽວກັບການປັບປຸງບັນດາກົດໝາຍ ແລະ ໂຄງການຂອງລັດຖະບານສຳລັບເດັກທີພິການ ເຊິ່ງກຸ່ມດັ່ງກ່າວນີ້ ກໍສາມາດທີ່ຈະ:

- ຕິດຕໍ່ປະສານງານກັບບຸກຄົນທີ່ສຳຄັນພາຍໃນອົງການຈັດຕັ້ງຕ່າງໆຂອງລັດຖະບານ ເຊັ່ນ: ລັດຖະມົນຕີກະຊວງສາທາລະນະສຸກ, ລັດຖະມົນຕີກະຊວງສຶກສາ ເຊິ່ງອາດຈະສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງດັ່ງກ່າວນັ້ນ ກ່ຽວກັບການບໍລິການດ້ານຕ່າງໆທີ່ຊຸມຊົນຂອງທ່ານຕ້ອງການ ຫຼື ກ່ຽວກັບກົດໝາຍໃຫ້ມີການປົກປ້ອງເດັກທີ່ພິການນຳ.
- ປະສານສົມທົບກັບບຸກຄົນທີ່ມີຊື່ສຽງຕ່າງໆ ເຊັ່ນ: ນັກຮ້ອງ, ນັກກີລາ, ຫຼື ນັກສະແດງ ໃຫ້ຊ່ວຍໂຄສະນາເຜີຍແຜ່ ໃນການສ້າງຄວາມສາມັກຄີກັບຄົນພິການ.
- ຢູ່ບາງປະເທດ ກຸ່ມພໍ່ແມ່ ຂຽນຈົດໝາຍ, ຄຳຮ້ອງຟ້ອງ ຫຼືຈັດຕັ້ງການປະທ້ວງ ຖ້າວ່າພະນັກງານຂອງລັດ ຫາກບໍ່ມີການປັບປຸງແກ້ໄຂຊີວິດການເປັນຢູ່ຂອງຄົນພິການ. ສ່ວນຢູ່ ສ.ປ.ປ.ລາວ ອາດຈະນຳສະເໜີຄວາມຄິດເຫັນໃນກອງປະຊຸມ ຜ່ານນາຍບ້ານ ພະນັກກ່ຽວຂ້ອງ ຕາມແຕ່ລະຂັ້ນຕອນທີ່ເໝາະສົມ.
- ໃຫ້ການສຶກສາອົບຮົມໃຫ້ແກ່ບັນດານັກຂ່າວທາງໂທລະພາບ, ວິທະຍຸ, ໜັງສືພິມ ແລະ ຂ່າວສານອື່ນໆໃນການໂຄສະນາເຜີຍແຜ່.

ກຸ່ມພໍ່ແມ່ບາງສ່ວນກໍເຮັດວຽກກ່ຽວກັບການປົກປ້ອງຄົນພິການທາງສາຍຕາ ແລະ ຄົນພິການອື່ນໆ ເຊັ່ນ: ເດັກຈຳນວນຫຼວງຫຼາຍຕ້ອງພິການຕາ ເນື່ອງຈາກພວກເຂົາກິນອາຫານທີ່ມີວິຕາມິນ A ບໍ່ພຽງພໍ. (ເບິ່ງບົດທີ 16 ຍ້ອນສາເຫດໃດເດັກຈຶ່ງສູນເສຍສາຍຕາ ແລະ ພວກເຮົາຈະເຮັດແນວໃດ?) ຈຸດປະສົງຂອງກຸ່ມດັ່ງກ່າວນີ້ ຕ້ອງການປູກຈິດສຳນຶກກ່ຽວກັບ ສາເຫດຂອງການສູນເສຍຕາ ແລະ ວິທີການປູກຜັກ ເພື່ອປ້ອງກັນຄວາມພິການທາງສາຍຕາ.

ຕໍ່ໄປນີ້ແມ່ນເລື່ອງລາວກ່ຽວກັບ ກຸ່ມຂອງພໍ່ແມ່ທີ່ມີລູກພິການ ເອີ້ນຊື່ວ່າ ກຸ່ມ ໂລດ ປີປິດໂຕດ ທີ່ໄດ້ດຳເນີນວຽກງານເພື່ອປ່ຽນແປງຊີວິດການເປັນຢູ່ຂອງເດັກພິການ.

ພໍ່ແມ່ເປັນພາກຫົວໃຈໃນກຸ່ມ ໂລດ ປີປິໂຕດ

ຢູ່ໃນປະເທດ ນິການາກົວ ໄດ້ມີເດັກຫຼາຍກວ່າ 200 000 ຄົນ ທີ່ພິການ ເຊິ່ງສາເຫດຕົ້ນຕໍທີ່ກໍ່ໃຫ້ເກີດຄວາມພິການນັ້ນ ກໍ່ຄືຄວາມທຸກຈົນ. ຄວາມພິການທາງສາຍຕາ ຫຼື ຄວາມພິການອື່ນ ເກີດຂຶ້ນໄດ້ສະເໝີເມື່ອເດັກບໍ່ໄດ້ກິນອາຫານທີ່ພຽງພໍ ແລະ ອາໄສຢູ່ໃນຄອບຄົວທີ່ແອອັດ ເຊິ່ງງ່າຍແກ່ການຕິດເຊື້ອ.

ກ່ອນປີ 1987 ໄດ້ມີການບໍລິການຈຳນວນໜຶ່ງສຳລັບເດັກທີ່ພິການ ໃນປະເທດ ນິການາກົວ ຕໍ່ມາໄດ້ມີພໍ່ແມ່ຂອງເດັກພິການຈຳນວນ 12 ຄົນ ໄດ້ຕັດສິນໃຈສ້າງຕັ້ງກຸ່ມໜຶ່ງຂຶ້ນມາ ເພື່ອປັບປຸງຊີວິດການເປັນຢູ່ຂອງເດັກພິການ ເຊິ່ງພວກເຂົາເອີ້ນກຸ່ມດັ່ງກ່າວນັ້ນວ່າ: ກຸ່ມ ໂລດ ປີປິໂຕດ (Los PiPitos) , ມັນໄດ້ເປັນພາກສ່ວນໜຶ່ງໃນການສ້າງຄວາມຮັກແພງ, ຄວາມອົບອຸ່ນໃຫ້ແກ່ເດັກໃນຂອບເຂດທົ່ວປະເທດ ນິການາກົວ. ປະຈຸບັນນີ້ ກຸ່ມ ໂລດ ປີປິໂຕດ (Los PiPitos) ໄດ້ມີສະມາຊິກເພີ່ມຂຶ້ນເປັນ 20 ຄົນ ໃນຂອບເຂດທົ່ວປະເທດ ພວກເຂົາເຫລົ່ານັ້ນ ກໍ່ໄດ້ກາຍເປັນຜູ້ນຳໃນກອງໂຄສະນາແຫ່ງຊາດ ເພື່ອຊ່ວຍເຫລືອເດັກພິການ.

ກຸ່ມພໍ່ແມ່ ໂລດ ປີປິໂຕດ ໄດ້ມີການ:

- ຈັດຕັ້ງການປະຊຸມສົນທະນາກັນກ່ຽວກັບການຊ່ວຍເຫລືອຂອງພໍ່ແມ່ໃນການລ້ຽງດູເດັກພິການ.
- ຝຶກອົບຮົມໃຫ້ພະນັກງານແພດໝໍໃຫ້ຮູ້ ແລະ ເຂົ້າໃຈເດັກພິການປະເພດຕ່າງໆ.
- ໃຫ້ຄຳແນະນຳແກ່ກະຊວງສາທາລະນະສຸກ ກ່ຽວກັບຄວາມຕ້ອງການດ້ານການບໍລິການຕ່າງໆ ສຳລັບເດັກທີ່ພິການ.

ບັນດາໜ້າວຽກທີ່ກ່າວມາຂ້າງເທິງນັ້ນ ເປັນສ່ວນໜຶ່ງຂອງຄວາມຫວັງກຸ່ມ ໂລດ ປີປິໂຕດ ໃນການສ້າງສັງຄົມໃຫ້ຊ່ວຍເຫລືອເດັກພິການ ແລະ ພັດທະນາຄວາມອາດສາມາດຂອງພວກເຂົາ